


# ການຂຽນຂ່າວ

# ຂ່າວແມ່ນຫຍັງ? ແລະ ຂໍ້ມູນແມ່ນຫຍັງ?

# ຄຳຖາມປະຈຳວັນ

## ຂ່າວແມ່ນຫຍັງ?

# ແມ່ນຫຍັງ ທີ່ເຮັດໃຫ້ເກີດເປັນຂ່າວ?

- ເປັນເລື່ອງທີ່ມີຜົນກະທົບຕໍ່ຜູ້ຊົມຂອງທ່ານ ຫຼື ບໍ່?
- ເປັນເລື່ອງທີ່ຫາກໍ່ເກີດຂຶ້ນມາໃໝ່ໆເລີຍ ຫຼື ບໍ່?
- ເປັນເລື່ອງທີ່ກ່ຽວກັບໃຜຄົນໜຶ່ງທີ່ມີຊື່ສຽງ ຫຼື ບໍ່?
- ເປັນເລື່ອງທີ່ເກີດຂຶ້ນໃກ້ໂຕ ຂອງຜູ້ຊົມ ຫຼື ບໍ່?
- ເປັນເລື່ອງທີ່ກ່ຽວກັບຂໍ້ໂຕ້ຖຽງ ຫຼື ບໍ່?
- ເປັນເລື່ອງແປກໆ ຫຼື ຄາດຄິດບໍ່ເຖິງ ຫຼື ບໍ່?
- ເປັນເລື່ອງທີ່ໜ້າສົນໃຈ, ສຳຄັນ ຫຼື ມີກະແສ ຫຼື ບໍ່?
- ເປັນເລື່ອງທີ່ຜູ້ຄົນກຳລັງເວົ້າເຖິງ ຫຼື ບໍ່?
- ເປັນເລື່ອງທີ່ເຂົ້າເຖິງອາລົມຂອງຄົນ ຫຼື ບໍ່?
- ເລື່ອງນັ້ນມີຂໍ້ພິສູດທີ່ສາມາດຢືນຢັນໄດ້ບໍ່?

ຍິ່ງມີອົງປະກອບເຫຼົ່ານີ້ຫຼາຍເທົ່າໃດ ຍິ່ງຈະເຮັດໃຫ້ເລື່ອງນັ້ນມີໂອກາດເປັນຂ່າວສານເທົ່ານັ້ນ









# ພື້ນຖານຂອງການຂຽນຂ່າວ

## ????ແລະ???

- ?????ແມ່ນໃຜ?
- ??????ແມ່ນຫຍັງ?
- ?????ເປັນຫຍັງ?
- ???????ຢູ່ໃສ?
- ??????ເມື່ອໃດ?
- ?????ແນວໃດ?



# ມີໄຟໄໝ້ເຮືອນພັກ ບາດເຈັບ 2 ຄົນ, ອົບພະຍົບຫຼາຍສິບຄົນ

ມີໄຟໄໝ້ເຮືອນພັກ ???????????????ໃນຕອນເຊົ້າຂອງມື້ນີ້, ເຮັດໃຫ້ຜູ້ພັກເຊົ່າ 2 ຄົນ ໄດ້ຮັບບາດເຈັບ ແລະ ເຮັດໃຫ້ອີກຫລາຍສິບຄົນ ຕ້ອງໄດ້ອົບພະຍົບອອກຈາກທີ່ພັກ. ເຫດໄຟໄໝ້ ເກີດຂຶ້ນໃນເວລາປະມານ 04:30 ໂມງເຊົ້າ, ໄຟໄດ້ລຸກໄໝ້ເຮືອນພັກ ຊັ້ນ 3 ແລະ ຊັ້ນ 4 ຂອງອາຄານ ທີ່ຕັ້ງຢູ່ ຖະໜົນສາມແສນໄທ ນະຄອນຫຼວງວຽງຈັນ.

ເຈົ້າໜ້າທີ່ດັບເພີງ ໄດ້ໄປຮອດບ່ອນເກີດເຫດຢ່າງໄວວາ ແລະ ສາມາດຄວບຄຸມໄຟໄດ້ໃນເວລາ 6:00 ໂມງເຊົ້າ , ເພື່ອປ້ອງກັນບໍ່ໃຫ້ໄຟແຜ່ລາມໄປຮອດຕຶກອາຄານທີ່ຢູ່ໃກ້ຄຽງ ແລະ ຜູ້ບາດເຈັບສອງຄົນກໍ່ໄດ້ຖືກນຳສົ່ງໄປໂຮງໝໍສູນກາງ, ເຊິ່ງອາການຂອງເຂົາເຈົ້າ ແມ່ນປອດໄພແລ້ວ.

ເຈົ້າໜ້າທີ່ດັບເພີງ ທ່ານ ສົມໃຈ ພົມມະສັກ ກ່າວວ່າ: “ພວກເຮົາໂຊກດີທີ່ບໍ່ມີຜູ້ເສຍຊີວິດ,” ລາວຍັງໄດ້ເວົ້າອີກວ່າ “ຍ້ອນໄດ້ຮັບການລາຍງານຂ່າວໄຟໄໝ້ຢ່າງໄວວາ, ດັ່ງນັ້ນ ຈຶ່ງເຮັດໃຫ້ທີມງານຂອງພວກເຮົາສາມາດເອົາຄົນອອກຈາກອາຄານໄດ້ທັນເວລາ.”

ເຈົ້າໜ້າທີ່ກຳລັງສືບສວນສອບສວນຫາສາເຫດ ຂອງການເກີດໄຟໄໝ້ໃນຄັ້ງນີ້. ຈາກລາຍງານເບື້ອງຕົ້ນ, ຄາດວ່າອາດເກີດຈາກໄຟຟ້າລັດວົງຈອນ. ຜູ້ພັກອາໄສທີ່ໄດ້ຮັບຜົນກະທົບ ໄດ້ຍ້າຍໄປຢູ່ບ່ອນທີ່ພັກອາໄສທີ່ຈັດສັນໂດຍເຈົ້າໜ້າທີ່.

ພວກເຮົາຈະລາຍງານຂ່າວເພີ່ມເຕີມ ຖ້າຫາກມີຂໍ້ມູນມາໃໝ່?

# ຮູບແບບການຂຽນຂ່າວ□

- ເນື້ອໃນຫຼັກ: ຄວາມສຳຄັນຂອງເນື້ອເລື່ອງ, ສິ່ງທີ່ເກີດຂຶ້ນໃຫມ່□
- ໃນປະໂຫຍກທຳອິດຕ້ອງໃຫ້ມີ 5 □□□ແລະ 1□ ຫຼາຍທີ່ສຸດ□
- ຕ້ອງແມ່ນຄວາມຈິງ, ບໍ່ອີງໃສ່ຄວາມຄິດເຫັນ□
- ຕ້ອງຈະແຈ້ງ, ເຂົ້າໃຈງ່າຍ, ໃຊ້ຄຳສັບທີ່ເວົ້າກັນໃນຊີວິດປະຈຳວັນ ແລະ ບໍ່ໃຫ້ໃສ່ຕົວອັກສອນຫຍໍ້ທີ່ບໍ່ຮູ້ຈັກ□



# ການເຮັດວຽກເປັນກຸ່ມ□





- ແບ່ງອອກເປັນກຸ່ມລະ □ ຄົນ□
- ກໍານົດຫົວຂໍ້ຂ່າວ□
- ຫົວຂໍ້: ໂດຍການຝຶກອົບຮົມນີ້□
- ຜູ້ອ່ານ: ຜູ້ອ່ານແມ່ນ ຄົນຢູ່ໃນປະເທດຂອງທ່ານ□

- ***ຂໍ້ຄວນຈື່ຈໍາ!***
- ***ຕ້ອງໃຫ້ມີ 5□□□ແລະ 1□ ຄົນຖ້ວນ□***
- ***ເຮັດໃຫ້ບົດຂ່າວໜ້າສົນໃຈ ສໍາລັບຜູ້ອ່ານຂອງທ່ານ□***

# ຂໍຂອບໃຈ



# Do not use following slide

# Group work Assignment





- Work in teams of 4
- Write a short news story (at least 3 paragraphs) on the plane crash using the relevant information in the list.
- *Audience*: Readers in your country




***Remember!***

- Use inverted pyramid style (most important info at the beginning)
- Consider the 5 Ws and 1 H
- You will **not** use all the information on the list.